ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 007 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 03 APR 2014

# ລະບຽບ
# ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ ລົງວັນທີ 17 ທັນວາ 2013.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ຜັນຂະຫຍາຍ ກົດໝາຍວ່າດ້ວຍຫຼັກຊັບ ພາກທີ VI ເພື່ອກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ໃຫ້ຖືກຕ້ອງ, ຄົບຖ້ວນ, ຈະແຈ້ງ ແລະ ທັນເວລາ ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ໃນການເຄື່ອນໄຫວວຽກງານຫຼັກຊັບ ແລະ ໃຫ້ມວນຊົນໄດ້ຮັບຂໍ້ມູນຂ່າວສານຢ່າງທົ່ວເຖິງ ແລະ ປະກອບສ່ວນເຂົ້າໃນການພັດທະນາຕະຫຼາດທຶນ ຂອງ ສປປ ລາວ.

**ມາດຕາ 2 ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ການລາຍງານ ແມ່ນການແຈ້ງໃຫ້ອົງການຄຸ້ມຄອງວຽກງານຫຼັກຊັບ ເພື່ອຮັບຊາບ ແລະ ຕິດຕາມກວດກາ. ການເປີດເຜີຍຂໍ້ມູນ ແມ່ນການແຈ້ງໃຫ້ມວນຊົນຮັບຊາບ.

ເນື້ອໃນຂອງ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະກອບດ້ວຍ ການເຄື່ອນໄຫວທຸລະກິດ, ເອກະສານລາຍງານການເງິນ ແລະ ຂໍ້ມູນສໍາຄັນຕ່າງໆຂອງບໍລິສັດ ຕາມໄລຍະເວລາ ແລະ ຊ່ອງທາງ ທີ່ໄດ້ກໍານົດໄວ້ໃນລະບຽບສະບັບນີ້.

ເອກະສານລາຍງານການເງິນ ປະກອບດ້ວຍ:

1. ໃບສະຫຼຸບຊັບສິນບັດ;
2. ໃບລາຍງານຜົນໄດ້ຮັບ;
3. ໃບລາຍງານກະແສເງິນສົດລວມ;
4. ໃບລາຍງານສ່ວນປ່ຽນແປງຂອງທຶນ;
5. ບົດອະທິບາຍກ່ຽວກັບ ຫຼັກການ, ວິທີການດ້ານການບັນຊີທີ່ໄດ້ນໍາໃຊ້.

**ມາດຕາ 3 ຂອບເຂດການນໍາໃຊ້**

ລະບຽບສະບັບນີ້ ນໍາໃຊ້ສໍາລັບ ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ເຄື່ອນໄຫວວຽກງານຫຼັກຊັບຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ.

**ມາດຕາ 4 ຫຼັກການ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕ້ອງປະຕິບັດຕາມຫຼັກການພື້ນຕໍ່ ດັ່ງນີ້:

1. ຖືກຕ້ອງ, ຄົບຖ້ວນ, ຈະແຈ້ງ ແລະ ທັນເວລາ;
2. ຮັບປະກັນຄວາມສະເໝີພາບ ຂອງມວນຊົນ ໃນການເຂົ້າເຖິງຂໍ້ມູນທີ່ເປີດເຜີຍ;
3. ຂໍ້ມູນທີ່ ລາຍງານ ແລະ ເປີດເຜີຍ ຕ້ອງເປັນພາສາລາວ ແລະ ພາສາຕ່າງປະເທດ ເພີ່ມເຕີມຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 5 ພັນທະໃນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີພັນທະລາຍງານ ແລະ ເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບສະບັບນີ້ ພ້ອມທັງ ຕ້ອງຮັບຜິດຊອບຕໍ່ເນື້ອໃນທີ່ ລາຍງານ ແລະ ເປີດເຜີຍ ດັ່ງກ່າວ.

ສໍາລັບການເປີດເຜີຍຂໍ້ມູນ ຂອງບໍລິສັດຈົດທະບຽນ ແມ່ນ ຕະຫຼາດຫຼັກຊັບ ເປັນຜູ້ຮັບຜິດຊອບ ຕິດຕາມກວດກາ ພາຍຫຼັງ ບໍລິສັດຈົດທະບຽນໄດ້ເປີດເຜີຍຂໍ້ມູນຕໍ່ມວນຊົນ. ກໍລະນີ ພົບເຫັນຂໍ້ມູນທີ່ເປີດເຜີຍນັ້ນບໍ່ຖືກຕ້ອງ ຕະຫຼາດຫຼັກຊັບ ຕ້ອງແຈ້ງໃຫ້ ບໍລິສັດຈົດທະບຽນ ປັບປຸງ ຫຼື ຊີ້ແຈງ ໃຫ້ສໍາເລັດກ່ອນວັນເປີດການຊື້-ຂາຍຫຼັກຊັບຖັດໄປ ພ້ອມທັງ ລາຍງານໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຊາບ, ຖ້າບໍລິສັດຈົດທະບຽນ ບໍ່ສາມາດ ປັບປຸງ ຫຼື ຊີ້ແຈງ ຕະຫຼາດຫຼັກຊັບ ຕ້ອງເລື່ອນການຊື້-ຂາຍຫຼັກຊັບ ຂອງບໍລິສັດຈົດທະບຽນດັ່ງກ່າວຈົນກວ່າສາມາດປັບປຸງ ຫຼື ຊີ້ແຈງ ໄດ້.

**ມາດຕາ 6 ການແຕ່ງຕັ້ງຜູ້ຮັບຜິດຊອບໃນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບໃນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສໍາລັບບໍລິສັດຕົນ ຢ່າງໜ້ອຍ ສອງ ຄົນ ຊຶ່ງໜຶ່ງ ໃນຜູ້ຮັບຜິດຊອບ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ຖືກແຕ່ງຕັ້ງຕ້ອງແມ່ນຮອງຜູ້ອໍານວຍການໃຫຍ່ຜູ້ຊີ້ນໍາວຽກງານການເງິນ.

ພາຍຫຼັງ ແຕ່ງຕັ້ງຜູ້ຮັບຜິດຊອບ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສໍາເລັດ ຕ້ອງແຈ້ງລາຍຊື່ໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກໍານົດເວລາ ຫ້າວັນ ລັດຖະການນັບແຕ່ວັນແຕ່ງຕັ້ງສໍາເລັດ ເປັນຕົ້ນໄປ. ກໍລະນີ ຜູ້ຮັບຜິດຊອບ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ຖືກແຕ່ງ

ຕັ້ງນັ້ນ ບໍ່ສາມາດປະຕິບັດໜ້າທີ່ດັ່ງກ່າວ ຍ້ອນເຫດຜົນໃດໜຶ່ງ ໃຫ້ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແຕ່ງຕັ້ງຜູ້ອື່ນປ່ຽນແທນ ພ້ອມທັງແຈ້ງລາຍຊື່ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນແຕ່ງຕັ້ງປ່ຽນແທນສຳເລັດ ເປັນຕົ້ນໄປ.

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ແຕ່ລະຄັ້ງ ຕ້ອງໄດ້ຮັບການເຊັນຢັ້ງຢືນຈາກ ຜູ້ຮັບຜິດຊອບການລາຍງານ ແລະ ການເປີດເຜີຍຂໍ້ມູນ.

**ມາດຕາ 7 ຮູບແບບ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະກອບມີ ສີ່ ຮູບແບບ ຄື: ປົກກະຕິ, ກະທັນຫັນ, ຕາມການຮຽກຮ້ອງ ແລະ ດ້ວຍຄວາມສະໝັກໃຈ.

**ມາດຕາ 8 ຊ່ອງທາງ ການລາຍງານ ແລະ ການເປີດເຜີຍຂໍ້ມູນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານຂໍ້ມູນໃນ ສອງຊ່ອງທາງຄື: ເປັນລາຍລັກອັກສອນ ແລະ ເປັນເອເລັກໂຕຣນິກ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງເປີດເຜີຍຂໍ້ມູນ ຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ. ນອກຈາກນີ້ ຍັງສາມາດເປີດເຜີຍຂໍ້ມູນຜ່ານເວັບໄຊຂອງບໍລິສັດຕົນ ຫຼື ຜ່ານພາຫະນະສື່ມວນຊົນອື່ນ ຕາມຄວາມເໝາະສົມ ແຕ່ການເປີດເຜີຍຂໍ້ມູນດັ່ງກ່າວ ຕ້ອງເປີດເຜີຍພາຍຫຼັງໄດ້ເປີດເຜີຍຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ.

**ມາດຕາ 9 ການເກັບຮັກສາຂໍ້ມູນ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງກັບ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຢ່າງໜ້ອຍ ສິບປີ.

## ໝວດທີ 2
## ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

**ມາດຕາ 10 ຮູບແບບການລາຍງານ ແລະ ການເປີດເຜີຍຂໍ້ມູນ ປົກກະຕິ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ແບບປົກກະຕິ ແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕາມງວດເວລາ ຊຶ່ງປະກອບມີ: ປະຈຳໄຕມາດ, ປະຈຳຫົກເດືອນຕົ້ນປີ ແລະ ປະຈຳປີ.

1. **ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະຈຳໄຕມາດ**

   ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນປະຈຳໄຕມາດໜຶ່ງ ແລະ ໄຕມາດສາມ ພາຍໃນ ສີ່ສິບຫ້າວັນ ນັບແຕ່ວັນສິ້ນສຸດໄຕມາດໜຶ່ງ ແລະ ໄຕມາດສາມ ເປັນຕົ້ນໄປ.

   ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍ ປະຈຳໄຕມາດ ປະກອບມີ ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳໄຕມາດຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເອກະສານລາຍງານການເງິນ ທີ່ໄດ້ຮັບການຮັບຮອງຈາກຝ່າຍບັນຊີ, ຝ່າຍກວດກາພາຍໃນ ແລະ ຜູ້ອຳນວຍການຂອງບໍລິສັດດັ່ງກ່າວ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບແຍກກິດຈະການ ແລະ ລວມກິດຈະການ.

2. **ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະຈຳທັກເດືອນຕົ້ນປີ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນປະຈຳຫົກເດືອນຕົ້ນປີ ພາຍໃນ ຫົກສິບວັນ ນັບແຕ່ວັນສິ້ນສຸດໄຕມາດສອງ ເປັນຕົ້ນໄປ.

ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍ ປະຈຳຫົກເດືອນຕົ້ນປີ ປະກອບມີ ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳຫົກເດືອນຕົ້ນປີຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເອກະສານລາຍງານການເງິນ ທີ່ໄດ້ຮັບການທົບທວນ ຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານຂອງບໍລິສັດດັ່ງກ່າວ.

ເນື້ອໃນຂອງ ເອກະສານລາຍງານການເງິນປະຈຳຫົກເດືອນຕົ້ນປີ ຕ້ອງສະແດງໃຫ້ເຫັນຂໍ້ມູນ ປະຈຳໄຕມາດສອງ ລວມຢູ່ນຳ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບແຍກກິດຈະການ ແລະ ລວມກິດຈະການ.

3. **ການລາຍງານ ແລະ ການເປີດເຜີຍຂໍ້ມູນ ປະຈຳປີ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ປະຈຳປີ ພາຍໃນ ໜຶ່ງຮ້ອຍຊາວວັນ ພາຍຫຼັງສິ້ນສຸດປີການບັນຊີ ເປັນຕົ້ນໄປ.

ຂໍ້ມູນທີ່ຕ້ອງ ລາຍງານ ແລະ ເປີດເຜີຍ ປະຈຳປີ ປະກອບມີ ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບ ຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດດັ່ງກ່າວ.

ເນື້ອໃນຂອງ ເອກະສານລາຍງານການເງິນປະຈຳປີ ຕ້ອງສະແດງໃຫ້ເຫັນຂໍ້ມູນ ປະຈຳໄຕມາດສີ່ ລວມຢູ່ນຳ.

ກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເປັນກຸ່ມບໍລິສັດ ເອກະສານລາຍງານການເງິນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນ ທັງແບບແຍກກິດຈະການ ແລະ ລວມກິດຈະການ.

### ມາດຕາ 11 ຮູບແບບການລາຍງານ ແລະ ການເປີດເຜີຍ ກະທັນຫັນ

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ແບບກະທັນຫັນ ແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນຕາມເຫດການໃດໜຶ່ງທີ່ເກີດຂຶ້ນ.

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນ ຊາວສີ່ຊົ່ວໂມງ ໃນວັນລັດຖະການ ກໍລະນີ ມີເຫດການໃດໜຶ່ງເກີດຂຶ້ນ ທີ່ມີຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຕໍ່ການຕັດສິນໃຈລົງທຶນ, ຕໍ່ການປ່ຽນແປງລາຄາຫຼັກຊັບ ແລະ ຕໍ່ການດຳເນີນທຸລະກິດ ດັ່ງນີ້:

1. ມື້ເປີດກອງປະຊຸມຜູ້ຖືຮຸ້ນ ແລະ ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ;
2. ການໄດ້ມາ ແລະ ຈຳໜ່າຍຊັບສິນ ທີ່ມີມູນຄ່າຫຼາຍກວ່າ ຫ້າສ່ວນຮ້ອຍ ຂອງຊັບສິນທັງໝົດຂອງບໍລິສັດ ແລະ ລາຍການກ່ຽວພັນ ລວມທັງການຊ່ວຍເຫຼືອທາງການເງິນໃຫ້ແກ່ ບຸກຄົນ ຫຼື ນິຕິບຸກຄົນອື່ນ;
3. ການຮ່ວມ ຫຼື ຍົກເລີກ ການຮ່ວມລົງທຶນ, ການຄວບ, ຍຸບເລີກ, ຂາຍ ຫຼື ໂອນກິດຈະການໃດໜຶ່ງ ຫຼື ທັງໝົດ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ;
4. ການອອກຜະລິດຕະພັນໃໝ່ທີ່ສຳຄັນ, ການພັດທະນາເຕັກໂນໂລຊີ ຫຼື ການຄົ້ນພົບທີ່ສຳຄັນ ກ່ຽວກັບຊັບພະຍາກອນທຳມະຊາດ;
5. ການອອກຈຳໜ່າຍຫຼັກຊັບເພີ່ມ ຫຼື ການຊື້ຫຼັກຊັບຄືນ;
6. ມະຕິກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນການຮັບຮອງເອົາແຜນການດຳເນີນທຸລະກິດປະຈຳປີ, ແຜນການຂະຫຍາຍທຸລະກິດໄລຍະກາງ-ຍາວ ແລະ ຍຸດທະສາດ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການປ່ຽນແປງຫຼັກການ, ວິທີການດ້ານການບັນຊີ ແລະ ມາດຕະຖານດ້ານການລາຍງານການເງິນ ທີ່ນຳໃຊ້ ແລະ ການກູ້ເງິນ ໃນຈຳນວນທີ່ມີຜົນຕໍ່ຖານະການເງິນ ແລະ ຜົນການດຳເນີນທຸລະກິດ;
7. ການປ່ຽນແປງທີ່ສຳຄັນ ໃນລາຍຈ່າຍ ເພື່ອການລົງທຶນ;
8. ການສະເໜີຊື້ຫຼັກຊັບ ຂອງບໍລິສັດອື່ນ;
9. ການຈ່າຍ ຫຼື ບໍ່ຈ່າຍ ເງິນ ຫຼື ຮຸ້ນ ປັນຜົນ;
10. ການປ່ຽນແປງ ສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ, ຄະນະອຳນວຍການ, ຫົວໜ້າບັນຊີ, ຫົວໜ້າການເງິນ ແລະ ຜູ້ຖືຮຸ້ນທີ່ຖືຮຸ້ນ ແຕ່ ຫ້າສ່ວນຮ້ອຍ ຂຶ້ນໄປ;
11. ບໍ່ສາມາດຊຳລະໜີ້ ຕາມວັນ ແລະ ເວລາ ທີ່ກຳນົດໄວ້ໃນສັນຍາ;
12. ບັນຊີເງິນຝາກຢູ່ທະນາຄານຖືກງົດການເຄື່ອນໄຫວຊົ່ວຄາວ ຫຼື ພາຍຫຼັງບັນຊີເງິນຝາກໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວຄືນ;
13. ໂຈະ ຫຼື ຢຸດເຊົາ ການດຳເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;
14. ປ່ຽນແປງ ຫຼື ຖືກຖອນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ;
15. ປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ, ຄະນະອຳນວຍການ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ຖືກລົງວິໄນ ຫຼື ຖືກດຳເນີນຄະດີ ເນື່ອງຈາກມີການລະເມີດລະບຽບກົດໝາຍ;
16. ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຢູ່ໃນສະພາວະລົ້ມລະລາຍ ຫຼື ສານປະຊາຊົນມີຄຳຕັດສິນໃຫ້ ເປັນວິສາຫະກິດລົ້ມລະລາຍ;
17. ໄດ້ຮັບຄວາມເສຍຫາຍຢ່າງຮ້າຍແຮງຈາກເຫດສຸດວິໄສ, ສະພາບເສດຖະກິດ-ສັງຄົມ ແລະ ອື່ນໆ;
18. ປ່ຽນແປງວັດຖຸປະສົງ ຫຼື ລັກສະນະການດຳເນີນທຸລະກິດ ບາງສ່ວນ ຫຼື ທັງໝົດ;
19. ເຮັດສັນຍາໃຫ້ບຸກຄົນອື່ນເຂົ້າມາບໍລິຫານ ພາຍໃນ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ບາງສ່ວນ ຫຼື ທັງໝົດ;
20. ເຫດການໃດໜຶ່ງ ທີ່ເກີດຂຶ້ນ ຫຼື ອາດເກີດຂຶ້ນ ທີ່ສົ່ງຜົນກະທົບຕໍ່ສິດ, ຜົນປະໂຫຍດຂອງຜູ້ຖືຮຸ້ນ ຫຼື ຕໍ່ການຕັດສິນໃຈໃນການລົງທຶນຂອງຜູ້ລົງທຶນ ຫຼື ການປ່ຽນແປງຂອງລາຄາຫຼັກຊັບຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ;
21. ເຫດການອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ນອກຈາກນີ້ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ພາຍໃນ ເຈັດສິບສອງ ຊົ່ວໂມງ ໃນວັນລັດຖະການ ກໍລະນີ ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ສົ່ງຜົນກະທົບໂດຍກົງຕໍ່ລາຄາຫຼັກຊັບ ແລະ ການຕັດສິນໃຈລົງທຶນ ເປັນຕົ້ນ:

1. ມະຕິຕົກລົງກ່ຽວກັບ ການສ້າງຕັ້ງ ຫຼື ຍຸບເລີກສາຂາ;
2. ຍົກຍ້າຍສໍານັກງານໃຫຍ່;
3. ປ່ຽນແປງຜູ້ກວດສອບ ລວມທັງ ຜູ້ກວດສອບຂອງບໍລິສັດໃນກຸ່ມຂອງຕົນ;
4. ການຊື້-ຂາຍຫຼັກຊັບ ຂອງ ປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ, ຄະນະກໍາມະການກວດກາພາຍໃນ, ຄະນະອໍານວຍການ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ.

ພ້ອມດຽວກັນນີ້ ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ພາຍໃນ ສິບສີ່ວັນ ນັບຕັ້ງແຕ່ວັນເປີດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ.

**ມາດຕາ 12 ຮູບແບບການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕາມການຮຽກຮ້ອງ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ແບບຕາມການຮຽກຮ້ອງ ແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງລາຍງານ ແລະ ເປີດເຜີຍຂໍ້ມູນ ແບບຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນກໍລະນີມີເຫດການໃດໜຶ່ງ ທີ່ສົ່ງ ຫຼື ອາດສົ່ງ ຜົນກະທົບຕໍ່ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ຕໍ່ສະຖຽນລະພາບຂອງຕະຫຼາດທຶນ.

**ມາດຕາ 13 ຮູບແບບການລາຍງານ ແລະ ການເປີດເຜີຍຂໍ້ມູນ ດ້ວຍຄວາມສະໝັກໃຈ**

ການລາຍງານ ແລະ ການເປີດເຜີຍຂໍ້ມູນ ແບບດ້ວຍຄວາມສະໝັກໃຈ ແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງການໃຫ້ຜູ້ຄຸ້ມຄອງ ແລະ ຜູ້ລົງທຶນຮັບຮູ້ກ່ຽວກັບຂໍ້ມູນດັ່ງກ່າວ ເພື່ອທີ່ຈະໄດ້ຮັບຂໍ້ມູນຂ່າວສານຢ່າງທົ່ວເຖິງ.

**ມາດຕາ 14 ການຊີ້ແຈງກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ**

ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງຊີ້ແຈງ ແລະ ຢັ້ງຢືນກ່ຽວກັບ ຂ່າວລື ຫຼື ຂ່າວສານຕ່າງໆ ທີ່ຜູ້ລົງທຶນໄດ້ຮັບຜ່ານຊ່ອງທາງໃດໜຶ່ງ ເຊັ່ນ: ບົດຄວາມທີ່ເຜີຍແຜ່ຜ່ານພາຫະນະສື່ມວນຊົນຕ່າງໆ, ລາຍງານການດໍາເນີນທຸລະກິດ ຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແລະ ຂໍ້ມູນທີ່ເປັນຂ່າວລືຕ່າງໆ ເຖິງວ່າ ຂໍ້ມູນດັ່ງກ່າວ ມີຄວາມຈິງ ຫຼື ບໍ່ມີຄວາມຈິງ, ມີຜົນ ຫຼື ບໍ່ມີຜົນກະທົບ ຕໍ່ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຕໍ່ລາຄາຫຼັກຊັບ ຫຼື ຕໍ່ການຕັດສິນໃຈຂອງຜູ້ລົງທຶນ.

ຕະຫຼາດຫຼັກຊັບ ຕ້ອງເປັນເຈົ້າການຕິດຕາມກວດກາ ຂ່າວລື ຫຼື ຂ່າວສານຕ່າງໆ ແລ້ວແຈ້ງໃຫ້ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຜ່ານທາງໂທລະສັບ, ອີເມວ, ແຟັກ ຫຼື ໜັງສືທາງການ ພ້ອມນັ້ນ ບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງຊີ້ແຈງຕໍ່ມວນຊົນ ຫຼື ລາຍງານຕໍ່ຜູ້ຄຸ້ມຄອງ ຜ່ານຊ່ອງທາງການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8 ຂອງລະບຽບສະບັບນີ້ ກ່ອນເປີດການຊື້-ຂາຍຫຼັກຊັບຮອບຖັດໄປ.

## ໝວດທີ 3
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ຂໍ້ຫ້າມ**

ຫ້າມ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ, ບໍ່ຈະແຈ້ງ ແລະ ບໍ່ທັນເວລາ;
2. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບິດເບືອນຄວາມຈິງ ເຮັດໃຫ້ຜູ້ໄດ້ຮັບຂໍ້ມູນເຂົ້າໃຈຜິດ;
3. ລາຍງານ ຫຼື ເປີດເຜີຍຂໍ້ມູນ ເພື່ອຈົງໃຈປິດບັງບາງຂໍ້ມູນ;
4. ເປີດເຜີຍຂໍ້ມູນ ບໍ່ທົ່ວເຖິງ, ເປີດເຜີຍສະເພາະບາງກຸ່ມຄົນ;
5. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບ ຫຼື ຂໍ້ມູນ ທີ່ບໍ່ອະນຸຍາດໃຫ້ເປີດເຜີຍ;
6. ເປີດເຜີຍຂໍ້ມູນ ຜ່ານຊ່ອງທາງອື່ນກ່ອນການເປີດເຜີຍຂໍ້ມູນຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ.

**ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ທີ່ມີຜົນງານດີເດັ່ນ ໃນການປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດລະບຽບສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທາງ ແພ່ງ ຫຼື ຮັບ ຜິດຊອບທາງອາຍາຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 165, 166, 167, 168, 169, 170 ແລະ 171 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

ນອກຈາກນີ້ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈະຖືກປັບໃໝ ເພີ່ມເຕີມ ດັ່ງນີ້:

1. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຖືກຕ້ອງ ຈະຖືກປັບໃໝ ສາມສິບລ້ານກີບ;
2. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຄົບຖ້ວນ ຈະຖືກປັບໃໝ ຊາວລ້ານກີບ;
3. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ຈະແຈ້ງ ຈະຖືກປັບໃໝ ຊາວລ້ານກີບ;
4. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບໍ່ທັນເວລາ ຈະຖືກປັບໃໝ ໜຶ່ງລ້ານກີບ ຕໍ່ວັນ;
5. ລາຍງານ ຫຼື ເປີດເຜີຍຂໍ້ມູນ ບິດເບືອນຄວາມຈິງ ເຮັດໃຫ້ຜູ້ໄດ້ຮັບຂໍ້ມູນເຂົ້າໃຈຜິດ ຈະຖືກປັບໃໝ ຊາວລ້ານກີບ;
6. ລາຍງານ ຫຼື ເປີດເຜີຍຂໍ້ມູນ ເພື່ອຈົງໃຈປິດບັງບາງຂໍ້ມູນ ຈະຖືກປັບໃໝ ສາມສິບລ້ານກີບ;
7. ເປີດເຜີຍຂໍ້ມູນ ບໍ່ທົ່ວເຖິງ, ເປີດເຜີຍສະເພາະບາງກຸ່ມຄົນ ຈະຖືກປັບໃໝ ຊາວລ້ານກີບ;
8. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບ ຫຼື ຂໍ້ມູນ ທີ່ບໍ່ທັນອະນຸຍາດໃຫ້ເປີດເຜີຍ ຈະຖືກປັບໃໝ ຫ້າສິບລ້ານກີບ;
9. ເປີດເຜີຍຂໍ້ມູນ ຜ່ານຊ່ອງທາງອື່ນກ່ອນເປີດເຜີຍຂໍ້ມູນຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ ຈະຖືກປັບໃໝ ຊາວຫ້າລ້ານກີບ ຕໍ່ຄັ້ງ.

# ໝວດທີ 4
# ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບການສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ລະບຽບສະບັບນີ້ ໃຊ້ປ່ຽນແທນ ໝວດທີ IV ການລາຍງານຂອງບໍລິສັດອອກຫຼັກຊັບ ຂອງລະບຽບວ່າດ້ວຍການລາຍງານ ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012 ແລະ ໝວດທີ II ການເປີດເຜີຍຂໍ້ມູນຂອງບໍລິສັດອອກຫຼັກຊັບ ຂອງຂໍ້ຕົກລົງວ່າດ້ວຍລະບຽບການເປີດເຜີຍຂໍ້ມູນ ສະບັບເລກທີ 014/ຄລຕ, ລົງວັນທີ 19 ພຶດສະພາ 2011.

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດ ແລະ ບົດບັນຍັດໃດທີ່ຂັດກັບລະບຽບສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ